UNITED STATES DEPARTMENT OF COMMERCE
Economics and Statistics Administration
U.S. Census Bureau
Washington, DC 20233-0001

ຮຽນທ່ານຜູ້ນຳທາງສາສະໜາ:

ປີ 2010 ແມ່ນສຳຄັນສຳລັບຊຸມຊົນທາງສາສະໜາຂອງທ່ານແລະປະເທດຊາດໂດຍລວມ. ການສຳຫຼວດ ປະຊາກອນສະຫະຣັຖຄັ້ງຕໍ່ໄປຈະໄດ້ຈັດຂຶ້ນ ແລະພວກເຮົາກໍຕ້ອງການຄວາມຊ່ວຍເຫຼືອຈາກທ່ານ ໃນການສ້າງຄວາມຮັບຮູ້ໃຫ້ແກ່ຊຸມຊົນຂອງທ່ານ ແລະຊຸກຍູ້ການປະກອບສ່ວນ. ພາຍໃຕ້ການບັງຄັບ ຂອງຣັຖຖະທຳມະນູນສະຫະຣັຖ, ການສຳຫຼວດປະຊາກອນແມ່ນການນັບທຸກຄົນທີ່ອາໄສໃນສະຫະຣັຖ - ທັງທີ່ເປັນພົນລະເມືອງ ແລະບໍ່ແມ່ນພົນລະເມືອງ. ຜົນການສຳຫຼວດ ປະຊາກອນຈະເປັນໂຕກຳນົດ ຈຳນວນຜູ້ແທນໃນສະພາແລະເປັນແນວທາງໃນການຕັດສິນໃຫ້ທຶນສະໜັບສະໜູນສຳລັບການບໍລິການ ທາງສັງຄົມ ທີ່ສຳຄັນແລະໂຄງການຊຸມຊົນຕ່າງໆ.

ອົງກອນທາງສາສະໜາ, ໂດຍສະເພາະແລ້ວ, ແມ່ນຈະໄດ້ປະໂຫຍດຫຼາຍຈາກຂໍ້ມູນການສຳຫຼວດປະຊາກອນທີ່ແມ້ນຍຳ. ໃນຖານະທີ່ຜູ້ອອກ ຄວາມຄິດເຫັນທີ່ໄວ້ໃຈໄດ້ໃນຊຸມຊົນຂອງທ່ານ, ທ່ານມີໜ້າທີ່ ໃນການສື່ສານໃຫ້ເຫັນເຖິງຄວາມສຳຄັນໃນການປະກອບສ່ວນການສຳຫຼວດປະຊາກອນ ປີ 2010. ຍົກຕົວຢ່າງ, ຊຸມຊົນຂອງທ່ານອາດຈະບໍ່ຮູ້ວ່າ:

- ແບບຟອມການສຳຫຼວດປະຊາກອນ ປີ 2010 ແມ່ນແບບຟອມທີ່ສັ້ນທີ່ສຸດອັນໜຶ່ງ ໃນປະຫວັດສາດ: ມັນຖາມພຽງ 10 ຄຳຖາມ ແລະໃຊ້ເວລາປະມານ 10 ນາທີໃນການປະກອບ.
- ອີງຕາມຂໍ້ມູນການສຳຫຼວດປະຊາກອນ, ຣັຖບານກາງຈັດສັນງົບປະມານຫຼາຍກວ່າ 400 ຕື້ໂດລາໃຫ້ແກ່ຣັຖບານຂອງຣັຖ, ທ້ອງຖິ່ນ ແລະຊົນເຜົ່າ. ຜູ້ນຳຕ່າງໆ ແມ່ນຂຶ້ນຢູ່ກັບ ຂໍ້ມູນການສຳຫຼວດປະຊາກອນເພື່ອໃຊ້ເປັນແນວທາງໃນການຕັດສິນໃຈໃຫ້ທຶນສະໜັບສະໜູນ ສຳລັບການສ້າງຖະໜົນໃໝ່, ໂຮງຮຽນ, ໂຮງໝໍ ແລະສູນຮັບຝາກເດັກ ແລະສູນຜູ້ສູງອາຍຸ.
- ຜູ້ນຳຈາກອົງກອນທາງສາສະໜາຫຼາຍແຫ່ງແມ່ນພຶ່ງພາຂໍ້ມູນການສຳຫຼວດປະຊາກອນ ເພື່ອໃຊ້ໃນການຂຽນຄຳຂໍທຶນ ແລະນຳໃຊ້ເປັນກໍລະນີເພື່ອຂໍຮັບ ການຊ່ວຍເຫຼືອ ແລະການບໍລິການ ເພີ່ມເຕີມ.

ໃນຖານະຜູ້ນຳ, ທ່ານຮັບໃຊ້ໃນບົດບາດທີ່ທ່ານສາມາດເຕືອນຜູ້ຄົນໄດ້ວ່າ ການສຳຫຼວດປະຊາກອນ ຈະເລີ່ມຂຶ້ນໃນໄວໆນີ້. ຈົ່ງຊຸກຍູ້ສະມາຊິກໃນຊຸມຊົນ ທາງສາສະໜາຂອງທ່ານໃຫ້ປະກອບແບບສອບຖາມ ໃຫ້ຄົບຖ້ວນ ແລະສົ່ງໄປສະນີກັບຄືນ ແລະໃຫ້ການຮັບຮອງວ່າການຕອບແບບຟອມການສຳຫຼວດ ປະຊາກອນນັ້ນປອດພັຍ. ຄວາມຊ່ວຍເຫຼືອຂອງທ່ານຈະມີຄວາມສຳຄັນຫຼາຍໃນການ ຮັບປະກັນວ່າ ພວກເຮົາໄດ້ຈຳນວນການນັບທີ່ຖືກຕ້ອງແນ່ນອນ. ພວກເຮົາຫວັງວ່າ ທ່ານຈະແບ່ງປັນເອກະສານ ທີ່ຄັດຕິດມາພ້ອມນີ້ກັບຊຸມຊົນທາງສາສະໜາຂອງທ່ານ.

- **ສານຈາກຜູ້ນຳ** – ນີ້ແມ່ນຊຸດຄຳກ່າວ, ຊຶ່ງເນັ້ນໃສ່ອົງປະກອບສຳຄັນຂອງການສຳຫຼວດປະຊາກອນ ປີ 2010, ໃຫ້ໂອກາດໃນການໃຫ້ ຄວາມຮູ້ແກ່ສະມາຊິກໃນຊຸມຊົນທາງສາສະໜາຂອງທ່ານ ກ່ຽວກັບປະໂຫຍດຂອງການສຳຫຼວດປະຊາກອນ ແລະຊຸກຍູ້ການປະກອບ ສ່ວນທີ່ນຳໄປສູ່ ວັນສຳຫຼວດປະຊາກອນ ຄືວັນທີ່ 1 ເມສາ 2010. ໃນຂະນະທີ່ທ່ານສາມາດນຳໃຊ້ຂໍ້ມູນນີ້ໄດ້ຕາມ ຄວາມຕ້ອງການຂອງທ່ານ, ທ່ານກໍອາດເຫັນວ່າມັນເໝາະສົມໂດຍສະເພາະທີ່ຈະນຳເອົາ ຂໍ້ຄວາມນີ້ລວມເຂົ້າໄວ້ໃນການປະກາດແຈ້ງຕາມຕາຕະລາງປົກກະຕິ.
- **ການປະກາດໃນບ່ອນຕ່າງໆ** – ຊຸດຂໍ້ຄວາມສັ້ນໆນີ້ສະທ້ອນໃຫ້ເຫັນເຖິງຄວາມຄິດຫຼັກທີ່ວາງໄວ້ໃນ ສານຂໍ້ຄວາມຈາກຜູ້ນຳ. ຂໍ້ຄວາມ ເຫຼົ່ານີ້ສາມາດພິມໃນເອກະສານຕີພິມຂອງຊຸມຊົນແລະຕິດໄວ້ ໃນກະດານຂ່າວ ແລະໃນເວັບໄຊກ່ອນທີ່ຮອດວັນສຳຫຼວດປະຊາກອນ.
- **ໃບປິວຊຸມຊົນທາງສາສະໜາ** – ໃບປິວນີ້ໃຫ້ຂໍ້ມູນກ່ຽວກັບ ການສຳຫຼວດປະຊາກອນ ແລະວ່າ ມັນມີຜົນກະທົບແນວໃດຕໍ່ທຸກຊຸມຊົນ. ກະຣຸນາແຈກຢາຍໃຫ້ແກ່ສະມາຊິກ, ຄອບຄົວ ແລະ ໝູ່ເພື່ອນ.
- **ແຜ່ນຂັ້ນໜັງສື** – ແຜ່ນຂັ້ນນີ້ສາມາດນຳໃຊ້ເພື່ອຂັ້ນໜ້າໃນໜັງສືສວດມົນ ແລະສິ່ງຕີພິມອື່ນໆໄດ້.

ເອກະສານທີ່ຢູ່ໃນຮູບອີເລັກໂຕຣນິກແມ່ນມີໃຫ້ໃນ “Partner With Us” ທີ່ 2010census.gov.

ຂໍຂອບໃຈສຳລັບການສະໜັບສະໜູນຂອງທ່ານໃນການຊ່ວຍໃຫ້ການນັບປະຊາກອນປີ 2010 ຖືກຕ້ອງ ແລະບັນລຸຜົນສຳເລັດ. ການປະກອບສ່ວນຂອງ ທ່ານສຳຄັນຕໍ່ຄວາມສຳເລັດຂອງ ການສຳຫຼວດປະຊາກອນ ປີ 2010.

ດ້ວຍຄວາມນັບຖື,

Dr. Robert Groves
ຜູ້ອຳນວຍການ, ສຳນັກງານສຳຫຼວດປະຊາກອນ

# ພວກເຮົາສາມາດ ສ້າງຄວາມ ແຕກຕ່າງໄດ້

ໃນຖານະສະມາຊິກຂອງຊຸມຊົນທາງສາສະໜາຂອງພວກເຮົາ, ພວກເຮົາເຊື່ອວ່າ ລວມກັນ, ພວກເຮົາສາມາດສ້າງຄວາມແຕກຕ່າງ ໃຫ້ເກີດຂຶ້ນໃນສະຖານທີ່ຕ່າງໆ ທີ່ພວກເຮົາອາໄສ, ເຮັດວຽກ ແລະເຄົາລົບບູຊາຮ່ວມກັນໄດ້. ໃນຂະນະທີ່ພວກເຮົາກຳລັງ ເຂົ້າສູ່ເດືອນເມສາ 2010, ພວກເຮົາມີໂອກາດທີ່ຈະ ປະຕິບັດຕາມຄວາມເຊື່ອ ເຫຼົ່ານັ້ນໂດຍການສະໜັບສະໜູນ ການສຳຫຼວດປະຊາກອນ ປີ 2010. ໃນຂະນະທີ່ມັນເບິ່ງຄືວ່າ ເປັນວຽກໜ້ອຍໆ, ແຕ່ການມີສ່ວນຮ່ວມຂອງພວກເຮົາ ກໍມີ ຄວາມສຳຄັນຫຼາຍຕໍ່ກັບຫຼາຍໂຄງການ ແລະການບໍລິການຕ່າງໆ ທີ່ພວກເຮົານຳໃຊ້ໃນທຸກມື້.

ການສຳຫຼວດປະຊາກອນ ປີ 2010
ແລະຊຸມຊົນທາງສາສະໜາ:



# ຖືກນັບເຂົ້າໃນຈຳນວນ ປະຊາກອນປີ 2010

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການສຳຫຼວດປະຊາກອນ ປີ 2010,
ກະລຸນາຕິດຕໍ່ສູນການສຳຫຼວດປະຊາກອນປະຈຳພູມິພາກ ຫຼື ຢ້ຽມຊົມທີ່ເວັບໄຊ
2010census.gov.

Issued December 2009 | Form D-3290 (BR-L)

United States Census 2010
ສຳມະໂນຄົວຂອງ ສະຫະລັດອາເມຣິກາ
ມັນຢູ່ໃນຄວາມຮັບຜິດຊອບ ຂອງພວກເຮົາທຸກຄົນ



ພວກເຮົາຫວັງວ່າ ທ່ານຈະຮ່ວມກັບພວກເຮົາ
ເພື່ອຊ່ວຍໃຫ້ມີການນັບຈຳນວນຄົນ ໃຫ້ສຳເລັດ
ເພື່ອຊຸມຊົນແລະປະເທດຊາດຂອງພວກເຮົາ.

ຄວາມສຳເລັດຂອງການສຳຫຼວດປະຊາກອນ ປີ 2010 ແມ່ນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ. ຂໍ້ມູນຕໍ່ໄປນີ້ສະໜອງຂໍ້ເທັດຈິງທີ່ສຳຄັນກ່ຽວກັບການສຳຫຼວດປະຊາກອນ, ມັນມີປະໂຫຍດແນວໃດຕໍ່ຊຸມຊົນທ້ອງຖິ່ນ, ແລະຕອບຄຳຖາມຕ່າງໆ ກ່ຽວກັບຄວາມປອດພັຍຂອງຂໍ້ມູນສ່ວນບຸກຄົນ. ກະລຸນາເຂົ້າຮ່ວມເພື່ອສ້າງ ຄວາມແຕກຕ່າງ ໂດຍການປະກອບສ່ວນໃນການສຳຫຼວດປະຊາກອນ ປີ 2010.

## ຄຳອະທິບາຍໂດຍຫຍໍ້

**ແມ່ນຫຍັງ:** ການສຳຫຼວດປະຊາກອນແມ່ນການນັບຈຳນວນຄົນທຸກຄົນທີ່ອາໄສໃນສະຫະຣັຖ.

**ໃຜ:** ທຸກຄົນທີ່ອາໄສຢູ່ໃນສະຫະຣັຖຕ້ອງຖືກນັບ-ທັງທີ່ເປັນພົນລະເມືອງແລະບໍ່ແມ່ນພົນລະເມືອງ.

**ເມື່ອໃດ:** ແບບຟອມການສຳຫຼວດປະຊາກອນຈະຖືກສົ່ງເຖິງ ຫຼື ສົ່ງທາງໄປສະນີໄປທຸກຄົວເຮືອນໃນເດືອນມີນາ 2010.

**ຍ້ອນຫຍັງ:** ຣັຖທຳມະນູນສະຫະຣັຖໄດ້ກຳນົດໃຫ້ມີການສຳຫຼວດປະຊາກອນ ທົ່ວປະເທດໜຶ່ງຄັ້ງໃນທຸກໆ 10 ປີ ເພື່ອຈຸດປະສົງໃນການ ກຳນົດເຂດຜູ້ແທນສຳຫຼັບສະພາຜູ້ແທນຂອງສະຫະຣັຖ. ຣັຖບານກາງນຳໃຊ້ຂໍ້ມູນການສຳຫຼວດປະຊາກອນໃນການຊ່ວຍ ພິຈາລະນາການໃຫ້ທຶນສຳລັບຣັຖ, ທ້ອງຖິ່ນ ແລະຣັຖບານຊົນເຜົ່າ.

**ແນວໃດ:** ທຸກຄົວເຮືອນຄວນປະກອບແບບຟອມການສຳຫຼວດໃຫ້ສຳເລັດທັນທີທີ່ໄດ້ຮັບແລະສົ່ງກັບຄືນທັນທີ. ຄົວເຮືອນທີ່ບໍ່ຕອບອາດໄດ້ຮັບການປຸ່ງແທນນັບແຕ່ໃນຕົ້ນເດືອນເມສາ 2010. ພະນັກງານສຳຫຼວດປະຊາກອນຈະໄປຢ້ຽມຢາມ ຄົວເຮືອນທີ່ບໍ່ໄດ້ສົ່ງແບບຟອມການສຳຫຼວດເພື່ອ ນັບຈຳນວນຄົນໃນຄົວເຮືອນນັ້ນ ດ້ວຍຕົນເອງ.

## ທ່ານສາມາດຊ່ວຍໄດ້ແນວໃດ

- ປະກອບແບບຟອມການສຳຫຼວດປະຊາກອນ ປີ 2010 ໃຫ້ຄົບຖ້ວນແລະສົ່ງກັບຄືນແລະຊຸກຍູ້ຄົນອື່ນໆ - ຄອບຄົວ, ເພື່ອນ ແລະເພື່ອນບ້ານ - ໃຫ້ເຮັດຄືກັນ.
- ຮ່ວມມືກັບພະນັກງານສຳຫຼວດປະຊາກອນ.

## ຄວາມສຳຄັນຂອງຂໍ້ມູນການສຳຫຼວດປະຊາກອນ

- ທຸກປີ, ຣັຖບານກາງຈັດສັນງົບປະມານຫຼາຍກວ່າ 400 ຕື້ໂດລາ ໃຫ້ແກ່ບັນດາຣັຖ, ທ້ອງຖິ່ນແລະຣັຖບານຊົນເຜົ່າ ໂດຍອີງໃສ່ຂໍ້ມູນການສຳຫຼວດປະຊາກອນ.
- ອົງກອນແລະສະຖາບັນຕ່າງໆທາງສາສະໜານຳໃຊ້ຂໍ້ມູນການສຳຫຼວດປະຊາກອນເພື່ອສະໝັກຂໍຮັບທຶນແລະພິຈາລະນາສະຖານທີ່ຕ່າງໆ ເພື່ອເປັນສະຖານທີ່ອຳນວຍຄວາມສະດວກແຫ່ງໃໝ່.
- ຂໍ້ມູນການສຳຫຼວດປະຊາກອນແນະແນວທາງການຕັດສິນໃຈໃນການ ໃຫ້ທຶນເພື່ອສະໜັບສະໜູນສະຖານທີ່ສຳຄັນໃນຊຸມຊົນ ເຊັ່ນ ໂຮງຮຽນ, ໂຮງໝໍ, ສູນຮັບຝາກເດັກ ແລະອື່ນໆ.
- ຂໍ້ມູນການສຳຫຼວດປະຊາກອນມີຜົນກະທົບຕໍ່ສຽງຂອງທ່ານໃນຣັຖສະພາ, ເຊັ່ນດຽວກັບ ໃຊ້ໃນການຈັດແບ່ງເຂດເລືອກຕັ້ງສຳຫຼັບສະພາຣັຖ, ສະພາຄາວຕີ້ ແລະສະພາເມືອງ ແລະເຂດການເລືອກຕັ້ງ.

## ງ່າຍດາຍ, ສຳຄັນແລະປອດພັຍ

- ເປັນໜຶ່ງໃນແບບຟອມທີ່ສັ້ນທີ່ສຸດໃນປະຫວັດສາດ,ແບບຟອມການສຳຫຼວດປະຊາກອນ ປີ 2010 ຖາມຄຳຖາມພຽງ 10 ຄຳຖາມແລະໃຊ້ເວລາເຮັດໃຫ້ສຳເລັດປະມານ 10 ນາທີ.
- ຄຳຕອບໃນແບບຟອມການສຳຫຼວດປະຊາກອນຄວນນັບລວມເອົາທຸກຄົນທີ່ອາໄສຕາມທີ່ຢູ່ນັ້ນ.
- ຕາມກົດໝາຍ, ສຳນັກງານສຳຫຼວດປະຊາກອນສະຫະຣັຖ ບໍ່ສາມາດເປີດເຜີຍຂໍ້ມູນສ່ວນບຸກຄົນຂອງບຸກຄົນໃດໆ ກັບຜູ້ໃດ, ລວມເຖິງ ອົງການຂອງ ຣັຖບານກາງ ແລະໜ່ວຍງານປະຕິບັດກົດໝາຍ.



# ການສໍາຫຼວດປະຊາກອນ ປີ 2010: ສານຈາກຜູ້ນໍາ

ຂໍ້ຄວາມຕໍ່ໄປນີ້ສາມາດນໍາໄປແບ່ງປັນໄດ້ໃນລະຫວ່າງການປະກາດແຈ້ງຕາມຕາຕະລາງ ປົກກະຕິໃນອາທິດທີ່ຈະເຂົ້າສູ່ມື້ສໍາຫຼວດປະຊາກອນ ວັນທີ 1 ເມສາ 2010, ເພື່ອໃຫ້ ຄວາມຮູ້ ແລະຊຸກຍູ້ໃຫ້ສະມາຊິກຊຸມຊົນທາງສາສະໜາ ເຂົ້າມາປະກອບຟອມສໍາຫຼວດ ປະຊາກອນ ປີ 2010 ໃຫ້ສໍາເລັດແລະສົ່ງກັບຄືນທາງໄປສະນີ. ການປະກາດແຈ້ງ ອັນດຽວກັນນີ້ໃນບ່ອນຕ່າງໆ ແມ່ນຖືກລວມຢູ່ໃນຊຸດເອກະສານນີ້ ແລະທັງສອງຢ່າງນີ້ກໍ ສາມາດດາວໂຫລດໄດ້ທີ່ “Partner With Us” ທີ່ 2010census.gov.

## ຂັ້ນທີ 1: ກ່ຽວກັບການສໍາຫຼວດປະຊາກອນ

ໃນເດືອນມີນາ 2010, ທີ່ຢູ່ຈໍານວນຫຼາຍກວ່າ 130 ລ້ານທີ່ຢູ່ທົ່ວປະເທດຈະໄດ້ຮັບແບບຟອມການສໍາຫຼວດປະຊາກອນ ປີ 2010. ຣັຖທໍາມະນູນສະຫະຣັຖກໍານົດໃຫ້ມີ ການສໍາຫຼວດປະຊາກອນແຫ່ງຊາດໜຶ່ງຄັ້ງໃນທຸກໆ 10 ປີ ເພື່ອຈຸດປະສົງໃນການ ຈັດສັນຜູ້ແທນໃນສະພາແຫ່ງສະຫະຣັຖ. ທຸກຄົນທີ່ອາໄສຢູ່ໃນສະຫະຣັຖ ຕ້ອງຖືກນັບ. ອັນນີ້ລວມເຖິງ ຜູ້ຄົນທຸກອາຍຸ, ເຊື້ອຊາດ, ກຸ່ມຊົນເຜົ່າ, ທັງທີ່ເປັນພົນລະເມືອງ ແລະບໍ່ແມ່ນພົນລະເມືອງ. ນອກຈາກນີ້, ຂໍ້ມູນການສໍາຫຼວດປະຊາກອນ ຈະສົ່ງ ຜົນກະທົບໂດຍກົງຕໍ່ການຈັດສັນງົບປະມານທີ່ຫຼາຍກວ່າ 400 ຕື້ໂດລາຕໍ່ປີເພື່ອ ແຈກຢາຍໃຫ້ແກ່ຣັຖ, ທ້ອງຖິ່ນ ແລະຣັຖບານຊົນເຜົ່າ. ກະຣຸນາປະກອບຟອມໃຫ້ຄົບຖ້ວນ ແລະສົ່ງກັບຄືນທາງໄປສະນີ ແລະຊຸກຍູ້ໃຫ້ຄອບຄົວຂອງທ່ານ, ເພື່ອນ ແລະເພື່ອນບ້ານ ເຮັດຄືກັນ. ສໍາລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

## ຂັ້ນທີ 2: ປະໂຫຍດຂອງການສໍາຫຼວດປະຊາກອນ

ໃນຖານະສະມາຊິກຂອງຊຸມຊົນທາງສາສະໜານີ້ ແລະຊຸມຊົນຕ່າງໆ ທີ່ພວກເຮົາອາໄສ ແລະເຮັດວຽກຢູ່, ພວກເຮົາມີສ່ວນໄດ້ເສັຽຢ່າງຫຼວງຫຼາຍຕໍ່ກັບການສໍາຫຼວດປະຊາກອນ ປີ 2010. ທຸກໆປີ, ຣັຖບານກາງຈະຈັດສັນງົບປະມານຫຼາຍກວ່າ 400 ຕື້ໂດລາໃຫ້ແກ່ຣັຖ, ທ້ອງຖິ່ນ ແລະຣັຖບານຊົນເຜົ່າ ໂດຍອີງໃສ່ຂໍ້ມູນການສໍາຫຼວດປະຊາກອນ. ອົງກອນ ຂອງພວກເຮົາສາມາດນໍາໃຊ້ຂໍ້ມູນນີ້ເພື່ອຮ້ອງຂໍຮັບທຶນສະໜັບສະໜູນ ແລະເພື່ອ ພິຈາລະນາກໍານົດສະຖານທີ່ຕ່າງໆ ທີ່ຈະເປັນສະຖານທີ່ອໍານວຍຄວາມສະດວກແຫ່ງໃໝ່. ໂດຍການປະກອບຟອມການສໍາຫຼວດປະຊາກອນໃຫ້ຄົບຖ້ວນ ແລະສົ່ງກັບຄືນ, ທ່ານຍັງໄດ້ຊ່ວຍໃຫ້ແນວທາງໃນການຕັດສິນດ້ານການໃຫ້ທຶນສໍາລັບໂຮງຮຽນຂອງພວກ ເຮົາ, ໂຮງໝໍ ແລະສູນຮັບຝາກເດັກ, ເຊັ່ນດຽວກັບທີ່ມັນສົ່ງຜົນກະທົບຕໍ່ການອອກສຽງ ຂອງ ພວກເຮົາໃນສະພາຄອງເກຣສ. ຂໍ້ມູນທີ່ເກັບກໍາໄດ້ນີ້ຈະຖືກນໍາໃຊ້ເພື່ອກໍານົດ ເຂດເລືອກຕັ້ງສໍາລັບຕໍາແໜ່ງທີ່ເລືອກຕັ້ງໃນທຸກລະດັບຂອງເມືອງ, ຣັຖ ແລະປະເທດ. ຈຶ່ງມີບົດບາດໃນການຕັດສິນໃຈ ທີ່ສໍາຄັນຊຶ່ງຜູ້ນໍາຣັຖບານຈະເຮັດໃນອີກ 10 ປີຂ້າງໜ້າ. ກະຣຸນາປະກອບຟອມຂອງທ່ານ ໃຫ້ຄົບຖ້ວນ ແລະສົ່ງກັບຄືນທາງໄປສະນີ ແລະຊຸກຍູ້ຄອບຄົວຂອງທ່ານ, ເພື່ອນ ແລະ ເພື່ອນບ້ານໃຫ້ເຮັດຄືກັນ. ສໍາລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

## ຂັ້ນທີ 3: ການປະກອບຟອມ

ຮອດເວລານີ້, ພວກທ່ານສ່ວນຫຼາຍກໍຄົງໄດ້ຮັບແບບຟອມການສໍາຫຼວດປະຊາກອນ ປີ 2010 ຂອງທ່ານແລ້ວ. ແບບຟອມນີ້ເປັນໜຶ່ງໃນແບບຟອມທີ່ສັ້ນທີ່ສຸດໃນປະຫວັດສາດ, ແບບຟອມການສໍາຫຼວດປະຊາກອນ ປີ 2010 ນີ້ຈະຖາມ 10 ຄໍາຖາມ ແລະໃຊ້ເວລາ ປະມານ 10 ນາທີໃນການປະກອບໃຫ້ສໍາເລັດ. ມັນງ່າຍດາຍ, ສໍາຄັນ ແລະປອດພັຍ, ແລະ ການປະກອບສ່ວນຂອງທ່ານກໍສໍາຄັນຫຼາຍ. ຕາມກົດໝາຍ, ສໍານັກງານສໍາຫຼວດປະຊາກອນແຫ່ງສະຫະຣັຖ ບໍ່ສາມາດແບ່ງປັນຂໍ້ມູນສ່ວນບຸກຄົນຂອງບຸກຄົນໃດກັບ ຜູ້ໃດໄດ້, ລວມທັງ ອົງການຂອງຣັຖບານກາງຕ່າງໆ ແລະ ໜ່ວຍງານປະຕິບັດກົດໝາຍ. ກະຣຸນາປະກອບແບບຟອມສໍາຫຼວດປະຊາກອນໃຫ້ຄົບຖ້ວນ ແລະສົ່ງກັບຄືນທາງໄປສະນີ ແລະຊຸກຍູ້ຄອບຄົວຂອງທ່ານ, ເພື່ອນ ແລະ ເພື່ອນບ້ານໃຫ້ເຮັດຄືກັນ. ສໍາລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

United States Census 2010
ສໍາມະໂນຄົວຂອງສະຫະລັດອາເມຣິກາ
ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ



## ຂັ້ນທີ 4: ຈື່ການສຳຫຼວດປະຊາກອນ ປີ 2010

*(ກ່ອນມື້ສຳຫຼວດປະຊາກອນ ວັນທີ 1 ເມສາ 2010)*

ຖ້າຫາກ ທ່ານຍັງບໍ່ໄດ້ປະກອບແບບຟອມການສຳຫຼວດປະຊາກອນແລະ ສົ່ງກັບຄືນ ທາງໄປສະນີ, ພວກເຮົາຂໍຊຸກຍູ້ໃຫ້ທ່ານເຮັດແນວນັ້ນ. ຂໍ້ມູນການສຳຫຼວດປະຊາກອນ ຈະມີຜົນກະທົບທີ່ ສຳຄັນຕໍ່ຊຸມຊົນຂອງພວກເຮົາ ເນື່ອງຈາກມັນຈະສົ່ງຜົນກະທົບຕໍ່ ໂອກາດໃນການໄດ້ຮັບທຶນສຳລັບຊຸມຊົນທາງ ສາສະໜາຂອງພວກເຮົາ ແລະເປັນແນວທາງໃນການຕັດສິນວ່າ ຈະສ້າງຖະໜົນໃໝ່, ໂຮງຮຽນ, ໂຮງໝໍ ແລະອີກຫຼາຍ ຢ່າງບ່ອນໃດແດ່. ທຸກຄົນ ແລະແບບຟອມການສຳຫຼວດປະຊາກອນທຸກອັນມີຄວາມ ສຳຄັນ. ຈົ່ງຊ່ວຍກັນຮັບປະກັນວ່າ ອ້າຍນ້ອງຂອງພວກເຮົາ ແລະຊຸມຊົນຂອງພວກເຮົາ ມີສິດເໝາະສົມ ທີ່ຈະໄດ້ຮັບທຶນສະໜັບສະໜູນທີ່ຈຳເປັນສຳລັບອະນາຄົດທີ່ສົດໃສ. ກະຣຸນາປະກອບແບບຟອມການສຳຫຼວດປະຊາກອນໃຫ້ຄົບຖ້ວນ ແລະສົ່ງກັບຄືນ ທາງໄປສະນີ ແລະຊຸກຍູ້ຄອບຄົວຂອງທ່ານ, ເພື່ອນ ແລະເພື່ອນບ້ານໃຫ້ເຮັດຄືກັນ. ສຳລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

## ຂັ້ນທີ 5: ຂອບໃຈ

*(ຫຼັງຈາກມື້ສຳຫຼວດປະຊາກອນ, 1 ເມສາ 2010)*

ມື້ນີ້ ພວກເຮົາຕ້ອງການຂອບໃຈທຸກຄົນທີ່ໄດ້ປະກອບຟອມການສຳຫຼວດປະຊາກອນ ປີ 2010 ໃຫ້ສຳເລັດ ແລະສົ່ງກັບຄືນທາງໄປສະນີ. ຄຳຕອບຂອງທ່ານໃຫ້ຂໍ້ມູນທີ່ສຳຄັນຊຶ່ງ ຈະຖືກນຳໃຊ້ປະກອບການຕັດສິນໃຈຕ່າງໆ ຊຶ່ງຈະມີຜົນກະທົບຕໍ່ພວກເຮົາທຸກຄົນ. ສຳລັບຜູ້ທີ່ຍັງບໍ່ໄດ້ປະກອບຟອມເທື່ອ, ພວກເຮົາຂໍຊຸກຍູ້ໃຫ້ທ່ານປະກອບຟອມໃຫ້ສຳເລັດ ໃນອາທິດນີ້. ຄົວເຮືອນທີ່ບໍ່ຕອບອາດໄດ້ຮັບແບບຟອມປ່ຽນແທນໃນ ຕົ້ນເດືອນເມສາ 2010. ພະນັກງານສຳຫຼວດປະຊາກອນຈະໄປຢ້ຽມຄົວເຮືອນທີ່ບໍ່ໄດ້ສົ່ງແບບຟອມກັບຄືນ ເພື່ອນັບຈຳນວນຄົນດ້ວຍຕົນເອງ. ກະຣຸນາໃຫ້ຄວາມຮ່ວມມືກັບພະນັກງານສຳຫຼວດ ປະຊາກອນເພື່ອຮັບປະກັນວ່າການນັບປະຊາກອນນັ້ນຖືກຕ້ອງ ແມ້ນຍຳແລະສົມບູນ. ສຳລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການສຳຫຼວດປະຊາກອນ ປີ 2010, ໄປທີ່ 2010census.gov.**

Issued December 2009
Form D-3290 (LM-L)





# ການສຳຫຼວດປະຊາກອນ ປີ 2010: ການປະກາດໃນບ່ອນຕ່າງໆ

ຂໍ້ມູນຕໍ່ໄປນີ້ສາມາດນຳໄປແຈ້ງປະກາດໃນຈົດໝາຍຂ່າວ, ກະດານຂ່າວ ແລະ ທາງໄປສະນີ, ແລະນຳໃຊ້ໃນເວັບໄຊຕ່າງໆ ໃນອາທິດກ່ອນໜ້າທີ່ຈະຮອດມື້ ສຳຫຼວດປະຊາກອນ ໃນວັນທີ 1 ເມສາ 2010, ເພື່ອໃຫ້ຄວາມຮູ້ ແລະຊຸກຍູ້ ໃຫ້ສະມາຊິກໃນອົງກອນທາງສາສະໜາມາ ປະກອບສ່ວນໃນການສຳຫຼວດປະຊາກອນ. ຂໍ້ຄວາມກ່າວທີ່ຄືກັນຂອງຜູ້ນຳແມ່ນລວມຢູ່ໃນຊຸດເອກະສານ ນີ້ ແລະ ທັງສອງຢ່າງນີ້ ກໍມີໃຫ້ດາວໂຫລດທີ່ “Partner With Us” ໃນເວັບໄຊ 2010census.gov.

## ຂັ້ນທີ 1: ກ່ຽວກັບການສຳຫຼວດປະຊາກອນ

### ການສຳຫຼວດປະຊາກອນ ປີ 2010: ກຳລັງມາຮອດໃນໄວໆນີ້

ໃນຂະນະທີ່ກຳລັງຮອດເວລາການສຳຫຼວດປະຊາກອນ ປີ 2010, ຄົວເຮືອນແຕ່ລະແຫ່ງຂອງພວກເຮົາ ຈະໄດ້ຮັບແບບຟອມອັນໜຶ່ງ. ເນື່ອງຈາກວ່າ ການສຳຫຼວດປະຊາກອນມີຜົນກະທົບໃຫຍ່ຫຼວງຕໍ່ກັບ ຊຸມຊົນທີ່ພວກເຮົາອາໄສ ແລະ ເຮັດວຽກຢູ່, ອົງກອນຂອງພວກເຮົາຮ່ວມງານກັບ ສຳນັກງານສຳຫຼວດປະຊາກອນ ແຫ່ງສະຫະຣັຖເພື່ອຊຸກຍູ້ການປະກອບສ່ວນ. ພາຍໃຕ້ການບັງຄັບຂອງຣັຖທຳມະນູນ ຂອງສະຫະຣັຖ, ທຸກຄົນທີ່ ອາໄສຢູ່ໃນສະຫະຣັຖຕ້ອງຖືກນັບ - ທັງທີ່ເປັນພົນລະເມືອງ ແລະ ບໍ່ແມ່ນພົນລະເມືອງ.ຂໍ້ມູນຈາກການນັບແຫ່ງຊາດນີ້ ຈະຊ່ວຍພິຈາລະນາຕັດສິນໃນການໃຫ້ທຶນສະໜັບສະໜູນ ທີ່ສຳຄັນ ແລະການກຳນົດການເປັນຜູ້ແທນຂອງຣັຖບານ. ກະຣຸນາປະກອບແບບສອບຖາມໃຫ້ສຳເລັດ ແລະສົ່ງກັບຄືນແລະຊຸກຍູ້ຄອບຄົວ, ເພື່ອນ ແລະເພື່ອນບ້ານໃຫ້ເຮັດຄືກັນ. ສຳລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

## ຂັ້ນທີ 2: ປະໂຫຍດຂອງການສຳຫຼວດປະຊາກອນ

### ການສຳຫຼວດປະຊາກອນ ປີ 2010: ມີຫຍັງທີ່ເປັນປະໂຫຍດສຳລັບທ່ານ?

ໃນຖານະສະມາຊິກຂອງຊຸມຊົນທາງສາສະໜາ ແລະຊຸມຊົນຕ່າງໆ ທີ່ພວກເຮົາເຮັດວຽກແລະອາໄສຢູ່, ພວກເຮົາ ແຕ່ລະຄົນມີສ່ວນໄດ້ສ່ວນເສັຽຫຼາຍໃນຂະນະທີ່ພວກເຮົາປະກອບແບບຟອມການສຳຫຼວດ ປະຊາກອນປີ 2010 ຂອງພວກເຮົາ. ໂດຍການປະກອບສ່ວນ, ພວກເຮົາສາມາດສົ່ງ ຜົນກະທົບໃຫ້ແກ່ຄຸນນະພາບຊີວິດ ໃນຊຸມຊົນຂອງ ພວກກເຮົາໄດ້ເພື່ອໃຫ້ດີຂຶ້ນ. ທຸກໆປີ, ຣັຖບານກາງຈັດສັນເງິນຈຳນວນຫຼາຍກວ່າ $400 ຕື້ໂດລາໃຫ້ແກ່ຣັຖ, ທ້ອງຖິ່ນ ແລະຣັຖບານຊົນເຜົ່າ ໂດຍອີງໃສ່ຂໍ້ມູນການສຳຫຼວດປະຊາກອນ - ໃນການໃຫ້ທຶນສະໜັບສະໜູນ ເພື່ອໃຊ້ໃນການ ສ້າງຖະໜົນ, ໂຮງຮຽນ, ໂຮງໝໍໃໝ່ ແລະເພື່ອຍົກລະດັບໂຄງການ ຊຸມຊົນທີ່ສຳຄັນຕ່າງໆ. ອົງກອນທາງສາສະໜາຄືກັບພວກເຮົາ ນຳໃຊ້ຂໍ້ມູນການສຳຫຼວດປະຊາກອນ ເພື່ອຮ້ອງຂໍຮັບທຶນຊຶ່ງສະໜັບສະໜູນ ໂຄງການຕ່າງໆ ແລະໂຄງການລິເລີ້ມທີ່ສຳຄັນ ຕໍ່ຊຸມຊົນຂອງພວກເຮົາ. ຂໍ້ມູນການສຳຫຼວດປະຊາກອນຍັງໃຫ້ ພວກເຮົາ ມີສິດມີສຽງໃນສະພາ ໃນຖານະເປັນຂໍ້ມູນທີ່ນຳໃຊ້ ໃນການກຳນົດຈຳນວນບ່ອນນັ່ງທີ່ແຕ່ລະຣັຖຈະມີໃນ ສະພາຜູ້ແທນຂອງສະຫະຣັຖ. ກະຣຸນາປະກອບແບບຟອມໃຫ້ຄົບຖ້ວນ ແລະສົ່ງກັບຄືນ ແລະຊຸກຍູ້ໃຫ້ຄອບຄົວ, ເພື່ອນ ແລະເພື່ອນບ້ານຂອງທ່ານເຮັດຄືກັນ. ສຳລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

## ຂັ້ນທີ 3: ການປະກອບຟອມ

### ການສຳຫຼວດປະຊາກອນ ປີ 2010: ຄຳຕອບຂອງທ່ານປອດພັຍ

ທ່ານຈະໄດ້ຮັບແບບຟອມການສຳຫຼວດປະຊາກອນປີ 2010. ແບບຟອມການສຳຫຼວດປະຊາກອນນີ້ເປັນ ແບບຟອມໜຶ່ງທີ່ສັ້ນທີ່ສຸດໃນປະຫວັດສາດ, ແບບຟອມການສຳຫຼວດປະຊາກອນ ປີ 2010 ຈະຖາມ 10 ຄຳຖາມແລະ ໃຊ້ເວລາປະມານ 10 ນາທີເພື່ອປະກອບໃຫ້ສຳເລັດ. ມັນງ່າຍດາຍ, ສຳຄັນ ແລະປອດພັຍ, ແລະການປະກອບສ່ວນ ຂອງທ່ານສຳຄັນຫຼາຍ. ຕາມກົດໝາຍ, ສຳນັກງານສຳຫຼວດປະຊາກອນບໍ່ສາມາດແບ່ງປັນຂໍ້ມູນສ່ວນບຸກຄົນກັບ ໃຜ, ລວມເຖິງ ອົງການແຫ່ງຣັຖບານກາງອື່ນໆ ແລະໜ່ວຍງານປະຕິບັດກົດໝາຍ. ກະຣຸນາປະກອບແບບຟອມໃຫ້ ຄົບຖ້ວນແລະສົ່ງກັບຄືນແລະຊຸກຍູ້ໃຫ້ຄອບຄົວ, ເພື່ອນ ແລະເພື່ອນບ້ານຂອງທ່ານເຮັດຄືກັນ. ສຳລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

United States Census 2010
ສຳມະໂນຄົວຂອງ ສະຫະລັດອາເມຣິກາ
ມັນຢູ່ໃນຄວາມຮັບຜິດຊອບ ຂອງພວກເຮົາທຸກຄົນ



# ຂັ້ນທີ 4: ຈື່ການສຳຫຼວດປະຊາກອນ ປີ 2010

*(ກ່ອນມື້ສຳຫຼວດປະຊາກອນ ວັນທີ 1 ເມສາ 2010)*

## ການສຳຫຼວດປະຊາກອນ ປີ 2010: ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ

ຖ້າຫາກ ທ່ານຍັງບໍ່ປະກອບຟອມສຳຫຼວດປະຊາກອນແລະສົ່ງກັບຄືນ, ພວກເຮົາຊຸກຍູ້ໃຫ້ທ່ານເຮັດແນວນັ້ນ. ຂໍ້ມູນປະຊາກອນຈະມີຜົນກະທົບທີ່ສຳຄັນຕໍ່ຊຸມຊົນຂອງພວກເຮົາເນື່ອງຈາກມັນຈະສົ່ງຜົນຕໍ່ໂອກາດໃນການໄດ້ທຶນເພື່ອຊຸມຊົນທາງສາສະໜາຂອງພວກເຮົາ ແລະເປັນແນວທາງໃນການຕັດສິນກ່ຽວກັບວ່າ ຈະສ້າງຖະໜົນ, ໂຮງຮຽນ, ໂຮງໝໍໃໝ່ບ່ອນໃດແລະອື່ນໆອີກ. ທຸກຄົນແລະທຸກແບບຟອມການສຳຫຼວດປະຊາກອນມີຄວາມສຳຄັນ. ຈົ່ງຊ່ວຍຮັບປະກັນວ່າອົງກອນ ແລະຊຸມຊົນຂອງພວກເຮົາມີສິດ ໄດ້ຮັບທຶນສະໜັບສະໜູນທີ່ຈຳເປັນເພື່ອອະນາຄົດທີ່ສົດໃສ. ກະຣຸນາປະກອບ ແລະສົ່ງກັບຄືນແບບຟອມການສຳຫຼວດປະຊາກອນ ແລະຊຸກຍູ້ຄອບຄົວ, ເພື່ອນ ແລະເພື່ອນບ້ານຂອງທ່ານໃຫ້ເຮັດຄືກັນ. ສຳລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

# ຂັ້ນທີ 5: ຂອບໃຈ

*(ຫຼັງຈາກມື້ສຳຫຼວດປະຊາກອນ, 1 ເມສາ 2010)*

## ການສຳຫຼວດປະຊາກອນ ປີ 2010: ຂອບໃຈ

ພວກເຮົາຢາກຂອບໃຈທຸກຄົນທີ່ໄດ້ປະກອບຟອມການສຳຫຼວດປະຊາກອນ ປີ 2010 ແລະສົ່ງກັບຄືນ. ທ່ານໄດ້ສ້າງຜົນກະທົບທີ່ສຳຄັນໃຫ້ແກ່ຊຸມຊົນນີ້ ແລະເປັນການຕັດສິນໃຈທີ່ສົ່ງຜົນກະທົບຕໍ່ພວກເຮົາທັງໝົດ, ແລະດ້ວຍເຫດນັ້ນພວກເຮົາຮູ້ສຶກຊາບຊຶ້ງໃຈຫຼາຍ. ສຳລັບຜູ້ທີ່ບໍ່ໄດ້ປະກອບຟອມໃຫ້ສຳເລັດ, ມັນຍັງບໍ່ສາຍເກີນໄປທີ່ຈະປະກອບສ່ວນໃນຂັ້ນຕອນທີ່ງ່າຍ, ສຳຄັນ ແລະປອດພັຍນີ້. ຄົວເຮືອນທີ່ບໍ່ຕອບແບບຟອມອາດໄດ້ຮັບແບບຟອມການປ່ຽນແທນໃນຕົ້ນເດືອນເມສາ 2010. ພະນັກງານສຳຫຼວດປະຊາກອນຈະໄປຢ້ຽມຢາມຄົວເຮືອນທີ່ບໍ່ສົ່ງແບບຟອມກັບຄືນເພື່ອນັບຈຳນວນຄົນດ້ວຍຕົນເອງ. ຈື່ໄວ້ວ່າ, ຄວາມສຳເລັດຂອງການສຳຫຼວດປະຊາກອນ ປີ 2010 ແມ່ນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາ. ສຳລັບຂໍ້ມູນເພີ່ມເຕີມ, ຢ້ຽມຊົມເວັບໄຊ 2010census.gov.

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການສຳຫຼວດປະຊາກອນ ປີ 2010, ໄປທີ່ 2010census.gov.**

Issued December 2009
Form D-3290 (DIA-L)